

# ໑໑ ພາບຊີວິດ

ໂດຍ ປາໄບ

ລົມຮ້ອນແຮງຂອງດວງອາທິດ ສາດລົງທົ່ວທ້ອງທົ່ງອັນເຫລືອງງາມແຫ່ງນັ້ນ ປານກັບວ່າຈິເຜົາຜານໃຫ້ລຸກໄຫມ້ຂື້ນເປັນໄຟ.... ແປວແດດເຕັ້ນໄຕ່ຢູ່ເທິງຄໍກ່ອງຂອງຮວງເຂົ້າຢ່າງບໍ່ເປັນຈັງຫວະ.... ໃບວີທີ່ແຍ່ພົ້ນຂື້ນມາປະທະກັບສາຍລົມອ່ອນ ໆ ສັ່ນສະທ້ານຢູ່ຈັ່ງຈຸ້ນຕລອດເວລາ....

ໜ້າ 2 ໃນກາງທົ່ງອັນກວ້າງໃຫຍ່ ມີຊີວິດມະນຸດຜູ້ອົດທົນພາກພຽນແລະເຂັ້ມແຂງ ກົ້ມໂຕລົງເກັບກ່ຽວຜົນງານຂອງເຂົາເຈົ້າ ຢູ່ເປັນຍ່ານ ໆ ເບິ່ງແຕ່ໄກ ເຮົາສາມາດແນມເຫັນພາບອັນອົບອຸ່ນ ແລະຊວນຝັນນັ້ນໄດ້ດ້ວຍຫົວໃຈຊື່ນຊົມຍິນດີ.... ເຮົາເຫັນຊາວນາກ່ຽວເຂົ້ານຳກັນ–ພ້ອມກັນ ແລະພ້ອມໃຈກັນ ດ້ວຍຄວາມອົດທົນອັນຍາວນານ ເຂົາເຈົ້າກ່ຽວໄປດ້ວຍຄວາມເມື່ອຍລ້າແລະລຳບາກຍິ່ງ ກາງແສງແດດອັນແຮງກ້ານັ້ນໃບໜ້າຂອງເຂົາເຈົ້າ ຄົງເຕັມໄປດ້ວຍເຫື່ອໄຄເມັດໃຫຍ່ ໆ ລາງເທື່ອມັນຄົງໄຫລເຂົ້າຕາຈົນແສບ.

ເບິ່ງນັ້ນແມ້! ຊາວນາຜູ້ນຶ່ງເງີຍໜ້າຂຶ້ນ ເອົາແຂນທີ່ມີກ່ຽວຢູ່ໃນກຳມື ປ້າຍເຊັດເຫື່ອອອກຈາກໜ້າຜາກ ລາວນຸ່ງເສື້ອສີດຳໝົ່ນ ແລະທາງດ້ານຫລັງ ມັນຖືກແດດເຜົາຈົນເປັນສີໝອກແລ້ວ ເສື້ອລາວຄືຊິປຽກສຸ່ມຍ້ອນເຫື່ອຜິວກາຍລາວ ຄືຊິມີແຕ່ຊ່າເກືອແຫ້ງ ໆ ຕິດຢູ່... ລາວບັນຈົງວາງຮວງເຂົ້າໃນກຳມືລົງເປັນຟ່ອນ ໆ ຄ່ອງເຄີຍແລະຣະມັດຣະວັງ ເພື່ອບໍ່ໃຫ້ເມັດເຂົ້າຫລົ່ນຖິ້ມ ແລ້ວກໍກົ້ມລົງເກັບກ່ຽວຕໍ່ໄປ....

ມັນເປັນພາບອັນດູດດື່ມຊື່ນຊາບ ເຖິງດວງຈິດໃຈຂອງຜູ້ເບິ່ງ ເຊັ່ນຂ້າພະເຈົ້າຜູ້ຊຶ່ງເບິ່ງແລ້ວ ເກັບເອົາມາຄິດ.

ເຂົາເຈົ້າກຳລັງເອົາຫລັງສູ້ຟ້າ ໜ້າສູ້ດິນ ອາບເຫື່ອຕາງນ້ຳ

ແສງຮ້ອນແຮງຂອງດວງອາທິດ ສາດລົງທົ່ວທ້ອງທົ່ງ ອັນເຫລືອງງາມແຫ່ງນັ້ນ... ສາວນ້ອຍໃນຊຸດສີດຳເກົ່າ ໆ ເປື້ອນ ໆ ເງີກໜ້າຂຶ້ນຈາກໜ້ານາ ໃບໜ້າສຸ່ມນ້ຳເຫື່ອບັງຢູ່ໃນກຸບ ທີ່ສຸບໃສ່ກັນແດດ ນາງຍ່າງຜ່າຕໍເຟືອງຄາບ ໆ ໄປຫາຄັນນາ ເຊິ່ງມີກ້ານຕານສອງສາມກ້ານສັກສູງເປັນຈຸ້ມທົ່ມເຊົາ ພ້ອມກັນລົງນັ່ງກ້ອງທົ່ມໃບຕານ ນາງກໍ່ຟ້າວຍົກຕີນເປືອຍເປົ່າຂຶ້ນພິຈາລະນາ ມັນຄົງຈະແຕກເຕີບແລ້ວກໍ່ມາຖືກຕໍເຟືອງຕຳເອົາອີກ

ຂ້າພະເຈົ້າຄິດໃນໃຈຈັ່ງຊັ້ນ ແຕ່ການຄິດວ່າ ຕີນຂອງສາວນ້ອຍຜູ້ນັ້ນແຕກເຕີບ ຂ້າພະເຈົ້າບໍ່ໄດ້ຄິດໃນທາງດູໝິ່ນມິນທາ ບໍ່ແມ່ນຄືພວກຄົນໃນເມືອງ ຊຶ່ງຫລຽວເບິ່ງຕີນຜູ້ສາວບ້ານນອກຊຶ່ງມາຍ່າງເລາະຊົມປຸ່ມທາດຫລວງ ແລ້ວອ່າຍຫົວໄປຄິກ ໆ ນຳໝູ່ ແຕ່ກົງກັນຂ້າມຂ້າພະເຈົ້າອາດພາບດ້ວຍຄວາມເຫັນອົກເຫັນໃຈເປັນທີ່ສຸດ ຄິດວ່າສາວນາງຄົງໄດ້ຮັບຄວາມເຈັບປວດຈາກການນັ້ນ ໆ ເຫັນໃຈທີ່ນາງຄົງບໍ່ມີໂອກາດໄປນັ່ງຊະເໝີຍເຈີຍຢູ່ໃນຮ້ານເສີມສວຍ ໃຫ້ຊ່າງຜູ້ນຸ່ງແຕ່ສົ້ງນ້ອຍ ໆ ກັບເສື້ອໂລ່ມບາງ ໆ ຍົກຊາມນ້ຳອຸ່ນມາແຊ່ລ້າງໃຫ້ ແລ້ວຈຶ່ງຕັດພັງຮ້າຍອອກ ເອົາຕີນນັ້ນມາວາງເທິງຕັກຢ່າງລົງເດີຍ ປາສ-າກຮູດຂີດຮູດ ຂ້າພະເຈົ້າຄິດໃນທຳນອງນີ້ ແລະນາງກໍຄົງບໍ່

ຮູ້ຈ້າດອກວ່າ ອັນເລັບຕີນເລັບມືແດງ ໆ ສ້ວຍແຫລມ ຜົມຈົງກອງຂຶ້ ຄວາຍມັ້ນ ເຂົາເຮັດຈັ່ງໃດກັນ ເສັຽເງິນນຳມັນມືລະທີ່ໃດ ໆ ນາງອາດຈະເຄີຍເຂົ້າໃນເມືອງຢູ່ແດ່ ອາດຈິເຄີຍເຫັນພວກຍິງສາວດາວສມັຍໃນຊຸດເສື້ອຜ້າອາພອນອັນຈົບງາມ ຕັດຫຍິບດ້ວຍຊ່າງຝີມືດີ (ແພງປານແກ້ວ) ນາງອາດຈີເຄີຍຫລຽວແນມນຳພວກນີ້ ດ້ວຍສາຍຕາອິດສາແລະອອນຊອນ ນາງອາດຈີຢາກເຮັດດີກັນ ແຕ່ນາງຜູ້ເປັນສາວຊາວນາຄົງບໍ່ມີໂອກາດອັນຟູມເຟືອຍນີ້

— ຫັ້ນລະ ! ລືມນ້ຳພ້າ ! ບອກໃຫ້ໃສ່ເກີບສຸບ ມັນບໍ່ຢາກໃສ່ ຈັກມັນມືອາຍໃຜ ! ສຽງຊາວນາຜູ້ຍິງເຖົ້າ ໆ ຮ້ອງໃສ່

ສຽງນັ້ນລອຍມາກັບສາຍລົມ ຟັ່ງໄດ້ຍິນແຕ່ພຽງຄ່ອຍ ໆ ແລ້ວຜູ້ເຈົ້າຂອງສຽງ ກໍກົ້ມໜ້າກ່ຽວຕໍ່ໄປ

— ບໍ່ຄືຈິຕາຍຫລາຍທ້ອນ ມັນຢູ່ໄກຫົວໃຈດອກ !

ຊາຍຊາວນາຜູ້ເຖົ້າລອດສຽງຫົວ ໆ ຂຶ້ນມາອີກ ສາວຊາວນາຜູ້ທີ່ໄຕດ້ວຍອາພອນສີດຳເກົ່າຖຸບຕີນລົງ

ແລ້ວຄວາເອົາບັ້ງທິງ ທີ່ພິງຢູ່ກັບຊຸ້ມໃບຕານຂຶ້ນມາຈໍ່ ປາກ ເງີງກົ້ມນັ້ມຂຶ້ນເພື່ອໃຫ້ນ້ຳທີ່ບັນຈຸຢູ່ໃນນັ້ນ ໄຫລລົງ ອັນເຫືອດແຫ້ງ ນາງດື່ມມັນດ້ວຍຄວາມແຊບນົວ ເພື່

ໃນກາງທົ່ງກວ້າງ ອັນເຫຼືອງງາມຈັບຈິດຈັບໃຈ ມັນເບັ່ງບານຊຶ່ງສະແດງເຖິງຄວາມຍາກລຳບາກ ເບັ່ງບານທີ່ຕອນທີ່ໄດ້ຮັບຮາງວັນອັນຍິ່ງໃຫຍ່ ແຕ່ມັນກໍ່ຖືກລືມໄປຢ່າງໜ້າເສົ້າໃຈ ໃນກາງເມືອງຫລວງອັນມີແຕ່ແສງສີ ຜູ່ບໍ່ຮູ້ໝາກຜົນອອກຈາກນ້ຳເຫື່ອຂອງຊາວນາມັ້ນ ລາງຕົ້ນກໍ່ນັ້ງຕາກພັດລົມ ລາງຕົ້ນກໍ່ນັ້ງອາບຄວາມເຢັນ ຢູ່ໃນຫ້ອງປັບອາກາດອັນທັນສມັຍ ມັນຈ່າງຜິດກັນປານຟ້າກັບດິນ ອີ່ຫຍັງຈັ້ງຊີ້ ໃນເມື່ອສະຖານທີ່ຢູ່ບໍ່ໄດ້ຫ່າງໄກກັນເລີຍ.

ເຂົາເຈົ້າກໍ່ງອມມັນຢ່າງຖນຸຖນອມຮັກແພງ ແລະເສັຽດາຍເຂົ້າທຸກເມັດທີ່ຕົກຫລົ່ນ ເສັຽດາຍມັນສົມກັບທີ່ປູກມັນຂຶ້ນດ້ວຍຄວາມຍາກລຳບາກ ເຖິງແມ່ນວ່າຕົ້ນພວກນີ້ຈະບໍ່ຮູ້ຈັກດາວຫຽນ ຈະບໍ່ຮູ້ຈັກມະນຸດອະວະກາດ ເຖິງແມ່ນລູກສາວຂອງເຂົາເຈົ້າ ຈະບໍ່ຮູ້ຈັກກິ່ນນ້ຳຫອມແລະເຄື່ອງສຳອາງ ເພື່ອເສີມສວຍຄວາມງາມອັນຈອມປອມຂອງໂລກກໍ່ຕາມ *ແຕ່ເມື່ອເຂົາເຈົ້າອີ່ມທ້ອງແລ້ວທຸກລາຍ ກ່ອນຈິລຸກໄປກິນນ້ຳລ່ອງຄໍ ເຂົາເຈົ້າກໍຍັງຮູ້ຈັກພະນົມມືເພື່ອສະແດງຄວາມຮູ້ສຶກ ເຖິງບຸນຄຸນຂອງເຂົ້າ ທີ່ລ້ຽງເຂົາເຈົ້າມາແຕ່ນ້ອຍຈົນໃຫຍ່ ແຕ່ໜຸ່ມຈົນເຖົ້າ ແຕ່ເກີດຈົນຕາຍ*